ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພາຍໃນ

ເລກທີ 16 /ພນ
ນະຄອນຫຼວງວຽງຈັນ, ວັນທີ 09 ພະຈິກ 2016

# ຄຳແນະນຳ
## ກ່ຽວກັບ ການຈັດຕັ້ງປະຕິບັດ
## ດຳລັດ ວ່າດ້ວຍ ການຄຸ້ມຄອງ ແລະ ປົກປ້ອງ ການເຄື່ອນໄຫວສາສະໜາ ຢູ່ ສປປ ລາວ.

- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງພາຍໃນ ສະບັບ ເລກທີ 253/ນຍ, ລົງວັນທີ 19 ສິງຫາ 2011;
- ອີງຕາມ ດຳລັດ ວ່າດ້ວຍ ການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວ ສາສະໜາ ຢູ່ ສປປ ລາວ ສະບັບເລກທີ 315/ລບ, ລົງວັນທີ 16 ສິງຫາ 2016;
- ອີງຕາມ ໜັງສືສະເໜີ ຂອງກົມວຽກງານຊົນເຜົ່າ ແລະ ສາສະໜາ ສະບັບເລກທີ 2247/ກຜສ, ລົງວັນທີ 03 ພ.ຈ.2016.

ວຽກງານສາສະໜາ ແມ່ນວຽກງານທາງດ້ານຈິດຕະສາດ ທີ່ລະອຽດອ່ອນ, ການເຊື່ອຖືສາສະໜາ ຫຼື ຄວາມເຊື່ອຖືໃດໜຶ່ງ ແມ່ນຄວາມຮຽກຮ້ອງຕ້ອງການ ທາງດ້ານຈິດໃຈ ຂອງປະຊາຊົນລາວບັນດາເຜົ່າ ທີ່ມີມາເປັນເວລາດົນນານສືບເນື່ອງມາຮອດປັດຈຸບັນ ແລະ ຍັງຈະຄົງຢູ່ຕໍ່ໄປໃນອະນາຄົດ. ເພື່ອເຮັດໃຫ້ສິດໃນການເຊື່ອຖື ຫຼື ບໍ່ເຊື່ອຖື ສາສະໜາ ຂອງພົນລະເມືອງລາວ ໄດ້ຮັບການຈັດຕັ້ງປະຕິບັດ ຕາມທີ່ໄດ້ກຳນົດໄວ້ໃນ ລັດຖະທຳມະນູນ ແຫ່ງ ສປປ ລາວ ປີ 2002 ລັດຖະບານໄດ້ອອກດຳລັດ ວ່າດ້ວຍ ການຄຸ້ມຄອງ ແລະ ປົກປ້ອງ ການເຄື່ອນໄຫວ ສາສະໜາ ຢູ່ ສປປ ລາວ ສະບັບເລກທີ 92/ນຍ, ລົງວັນທີ 05 ກໍລະກົດ 2002 ໂດຍແມ່ນ ສູນກາງແນວລາວສ້າງຊາດ ເປັນຜູ້ຮັບຜິດຊອບ. ພາຍຫຼັງທີ່ກະຊວງພາຍໃນ ໄດ້ຮັບການສ້າງຕັ້ງຂຶ້ນ ໃນວັນທີ 19 ສິງຫາ 2011 ແລະ ລັດຖະບານ ໄດ້ມອບໝາຍວຽກງານການຄຸ້ມຄອງລັດກ່ຽວກັບ ວຽກງານສາສະໜາ ໃຫ້ກະຊວງພາຍໃນ ເປັນຜູ້ຮັບຜິດຊອບ ໃນການປັບປຸງ ດຳລັດສະບັບດັ່ງກ່າວ ແລະ ໄດ້ປະກາດໃຊ້ ຢ່າງເປັນທາງການ ໂດຍລັດຖະບານ ແຫ່ງ ສປປ ລາວ ໃນວັນທີ 16 ສິງຫາ 2016.

ເຖິງຢ່າງໃດກໍ່ຕາມ, ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ ໃນການຈັດຕັ້ງປະຕິບັດ ນະໂຍບາຍ ການປ່ຽນແປງໃໝ່ໃຫ້ເຂົ້າສູ່ລວງເລິກ ແລະ ເພື່ອເຮັດໃຫ້ ການເຄື່ອນໄຫວ ຂອງບັນດາການຈັດຕັ້ງສາສະໜາ ເຂົ້າສູ່ກົນໄກການຄຸ້ມຄອງລັດ ພາຍໃຕ້ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳຕ່າງໆ ຂອງ ສປປ ລາວ ຈຶ່ງມີຄວາມຈຳເປັນຕ້ອງໄດ້ອອກຄຳແນະນຳ ການຈັດຕັ້ງປະຕິບັດ ດຳລັດ ວ່າດ້ວຍ ການຄຸ້ມຄອງ ແລະ ປົກປ້ອງ ການເຄື່ອນໄຫວ ສາສະໜາ ຢູ່ ສປປ ລາວ ສະບັບເລກທີ 315/ລບ, ລົງວັນທີ 16 ສິງຫາ 2016 ແນໃສ່ເຮັດໃຫ້ການຄຸ້ມຄອງ ແລະ ປົກປ້ອງ ການເຄື່ອນໄຫວວຽກງານສາສະໜາ ມີຄວາມເປັນເອກະພາບກັນ ໃນຂອບເຂດທົ່ວປະເທດ.

## ລັດຖະມົນຕີ ກະຊວງ ພາຍໃນ ອອກຄຳແນະນຳ:

### I. ຈຸດປະສົງ

ຄຳແນະນຳສະບັບນີ້ ອະທິບາຍເພີ່ມເຕີມ ເນື້ອໃນ ບາງໝວດ ແລະ ບາງມາດຕາ ຂອງ ດຳລັດ ວ່າດ້ວຍ ການຄຸ້ມຄອງ ແລະ ປົກປ້ອງ ການເຄື່ອນໄຫວສາສະໜາ ຢູ່ ສປປ ລາວ ສະບັບເລກທີ 315/ລບ, ລົງວັນທີ 16 ສິງຫາ 2016 ເພື່ອໃຫ້ມີຄວາມເຂົ້າໃຈທີ່ຖືກຕ້ອງ, ຊັດເຈນ ແລະ ເປັນເອກະພາບ ໃນການຈັດຕັ້ງປະຕິບັດ ໃນຂອບເຂດທົ່ວປະເທດ.

### II. ແນະນຳເພີ່ມຕື່ມ ບາງເນື້ອໃນ ຂອງດຳລັດ ສະບັບນີ້

1. ໝວດທີ 1 ບົດບັນຍັດທົ່ວໄປ ມາດຕາ 3 ຂໍ້ທີ 2
   - ວັດ ໝາຍເຖິງ ບ່ອນປະກອບພິທີກຳ, ສັງຂະກຳ ແລະ ທີ່ຢູ່ອາໄສ ຂອງນັກບວດ ເປັນຕົ້ນ ພະພິກຂຸສົງ, ສາມະເນນ, ພໍ່ຂາວ ແລະ ແມ່ຂາວ;
   - ໂບດ ໝາຍເຖິງ ບ່ອນປະກອບພິທີກຳ ຂອງສາສະໜາຄຣິດ;
   - ສຸເຫຼົ່າ ໝາຍເຖິງ ບ່ອນປະກອບພິທີກຳ ຂອງສາສະໜາອິດສະລາມ;
   - ທຳມະສະພາ ໝາຍເຖິງ ບ່ອນປະກອບພິທີກຳ ຂອງສາສະໜາບາຮາຍ.

2. ໝວດທີ 2 ການຈັດຕັ້ງສາສະໜາ

**2.1. ການຈັດຕັ້ງສາສະໜາ (ມາດຕາ 7 )**

ການຈັດຕັ້ງສາສະໜາ ແມ່ນການຈັດຕັ້ງໜຶ່ງ ຂອງຜູ້ເຊື່ອຖື ຕາມຫຼັກທຳ ຄຳສັ່ງສອນ, ຄຳພີ ແລະ ພິທີກຳ ອັນດຽວກັນ ຕາມໂຄງປະກອບໃດໜຶ່ງທີ່ແນ່ນອນ ແລະ ໄດ້ຮັບຮອງ ຈາກອົງການຈັດຕັ້ງລັດ ທີ່ກ່ຽວຂ້ອງ.

**2.2. ເງື່ອນໄຂ ໃນການຮັບຮູ້ ການຈັດຕັ້ງສາສະໜາ.**

ການຈັດຕັ້ງສາສະໜາໃດໜຶ່ງ ຈະຖືກຮັບຮູ້ໄດ້ ກໍ່ຕໍ່ເມື່ອ ປະກອບດ້ວຍເງື່ອນໄຂ ດັ່ງນີ້:

1) ການຈັດຕັ້ງຂອງຜູ້ຮ່ວມເຊື່ອຖື ຕາມຫຼັກທຳ ຄຳສັ່ງສອນ, ຄຳພີ, ພິທີກຳອັນດຽວກັນ ທີ່ບໍ່ຂັດກັບຜົນປະໂຫຍດ, ຮີດຄອງປະເພນີຂອງທ້ອງຖິ່ນ, ຂອງປະຊາຊົນລາວບັນດາເຜົ່າ ແລະ ຂອງຊາດ;
2) ມີກົດບັນຍັດ, ກົດລະບຽບ, ຫຼັກທຳ ຄຳສັ່ງສອນ ທີ່ສະແດງເຖິງຈຸດປະສົງ, ອຸດົມການ ແລະ ທິດທາງໃນການເຄື່ອນໄຫວ ສອດຄ່ອງກັບ ແນວທາງນະໂຍບາຍ, ກົດໝາຍ, ລະບຽບການ ແລະ ຮີດຄອງປະເພນີວັດທະນະທຳ ທີ່ເປັນເອກະລັກ ຂອງຊົນເຜົ່າ ກໍຄືຂອງຊາດ;
3) ມີແຜນການເຄື່ອນໄຫວໃນແຕ່ລະໄລຍະ ແລະ ຖືກຮັບຮອງຈາກ ກະຊວງພາຍໃນ;
4) ມີສະຖານທີ່ ເຮັດວຽກ ແລະ ປະກອບກິດຈະກຳທາງສາສະໜາ, ມີການຈັດຕັ້ງ ແລະ ມີບຸກຄະລາກອນ ທີ່ເປັນຕົວແທນໃຫ້ແກ່ສາສະໜາ ຢ່າງຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການ;
5) ຊື່ຂອງການຈັດຕັ້ງສາສະໜາ ບໍ່ຊໍ້າຊ້ອນ ກັບ ຊື່ການຈັດຕັ້ງສາສະໜາອື່ນ ທີ່ໄດ້ຮັບຮູ້ຢ່າງເປັນທາງການ.

2.3. ການປະກອບເອກະສານ ຂໍສ້າງຕັ້ງ ການຈັດຕັ້ງສາສະໜາ

ການຈັດຕັ້ງສາສະໜາ ທີ່ມີຈຸດປະສົງຂໍສ້າງຕັ້ງ ການຈັດຕັ້ງສາສະໜາ ມີຄວາມຮັບຜິດຊອບ ປະກອບເອກະສານ ດັ່ງນີ້:

1) ຄໍາຮ້ອງ;
2) ບົດວິພາກ ການສ້າງຕັ້ງ ການຈັດຕັ້ງສາສະໜາ;
3) ທໍາມະນູນ ຂອງແຕ່ລະການຈັດຕັ້ງ ສາສະໜາ;
4) ໂຄງຮ່າງການຈັດຕັ້ງ ແລະ ບັນຊີລາຍຊື່ ຄະນະນໍາ ຂອງການຈັດຕັ້ງສາສະໜາ ;
5) ເອກະສານສິດນໍາໃຊ້ທີ່ດິນ ຕາມກົດໝາຍ ວ່າດ້ວຍທີ່ດິນ (ສິດນໍາໃຊ້ທີ່ດິນ ເປັນຂອງສາສະນະ ສະຖານ;
6) ແຜນວາດ ສະຖານທີ່ເຮັດວຽກ.

2.4. ຂັ້ນຕອນ ການນໍາສະເໜີ ເອກະສານ ຂໍສ້າງຕັ້ງການຈັດຕັ້ງສາສະໜາ.

ການຈັດຕັ້ງສາສະໜາ ມີຄວາມຮັບຜິດຊອບ ປະກອບເອກະສານໃຫ້ຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ ໃນຂໍ້ 2.3 ຂອງຄໍາແນະນໍາສະບັບນີ້ ແລ້ວຍື່ນຕໍ່ ກະຊວງພາຍໃນ ເພື່ອຄົ້ນຄວ້າ ພິຈາລະນາ.

ພາຍຫຼັງ ໄດ້ຮັບເອກະສານຄົບຖ້ວນແລ້ວ ກະຊວງພາຍໃນ ມີຄວາມຮັບຜິດຊອບ ຄົ້ນຄວ້າ ແລະ ພິຈາລະນາ ແຈ້ງຕອບ ເປັນລາຍລັກອັກສອນ ໃຫ້ການຈັດຕັ້ງສາສະໜາ ພາຍໃນ ກໍານົດ ຫົກສິບວັນ. ກໍລະນີບໍ່ເຫັນດີ ຕ້ອງຊີ້ແຈງເຫດຜົນລະອຽດ.

2.5. ມາດຕະຖານ ແລະ ເງື່ອນໄຂ ຂອງບຸກຄະລາກອນທີ່ຖືກຄັດເລືອກເຂົ້າໃນ ການຈັດຕັ້ງສາສະໜາ.

ບຸກຄົນ ທີ່ຈະຖືກຄັດເລືອກ ຫຼື ແຕ່ງຕັ້ງ ເຂົ້າໃນຄະນະຮັບຜິດຊອບ ການຈັດຕັ້ງສາສະໜາ ທີ່ໄດ້ກໍານົດໄວ້ໃນ ໝວດທີ 2 ມາດຕາ 7 ວັກທີ 2 ຕ້ອງມີ ມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

ກ. ມາດຕະຖານ.

1) ກໍາແໜ້ນ ແນວທາງນະໂຍບາຍ ຂອງພັກ, ກົດໝາຍ ແລະ ລະບຽບການ;
2) ເປັນສາສະນິກະຊົນ ຂອງສາສະໜາດັ່ງກ່າວຢ່າງໜ້ອຍ 5 ປີຂຶ້ນໄປ;
3) ມີຄວາມຮູ້ ຢ່າງເລິກເຊິ່ງ ທາງດ້ານເນື້ອໃນ ຫຼັກທໍາ ຄໍາສັ່ງສອນ ແລະ ພິທີກໍາ ທາງສາສະໜາ;
4) ມີຄວາມຮູ້, ຄວາມສາມາດນໍາພາ ສາສະນິກະຊົນ ເຄື່ອນໄຫວກິດຈະກໍາ ແລະ ປະກອບພິທີກໍາ ທາງດ້ານສາສະໜາດັ່ງກ່າວຢ່າງຖືກຕ້ອງ.

ຂ. ເງື່ອນໄຂ

1) ສັນຊາດລາວ ໂດຍກໍາເນີດ;
2) ມີປະຫວັດຈະແຈ້ງ ແລະ ບໍ່ເຄີຍຖືກສານຕັດສິນລົງໂທດ ຕັດອິດສະລະພາບມາກ່ອນ;
3) ເຫັນດີເຫັນພ້ອມໃນການປະຕິບັດ ກົດໝາຍ ແລະ ລະບຽບການຕ່າງໆ ຂອງອົງການປົກຄອງແຕ່ລະ ຂັ້ນວາງອອກ ແລະ ເປັນແບບຢ່າງ ນໍາໜ້າໃນການປະຕິບັດ ຕາມທໍາມະນູນ ຂອງ ສາສະໜາດັ່ງກ່າວ;
4) ສຸຂະພາບແຂງແຮງດີ.

**2.6. ອົງການ ທີ່ມີສິດ ຮັບຮອງ ບຸກຄົນທີ່ຖືກຄັດເລືອກ ຫຼື ແຕ່ງຕັ້ງ ເຂົ້າໃນການຈັດຕັ້ງສາສະໜາ.**

ກະຊວງພາຍໃນ ເປັນຜູ້ຮັບຮອງ ບຸກຄົນທີ່ຖືກຄັດເລືອກເຂົ້າໃນຄະນະຮັບຜິດຊອບການຈັດຕັ້ງສາສະໜາ ທີ່ເຄື່ອນໄຫວ ກວມເອົາຫຼາຍແຂວງ;

ພະແນກພາຍໃນແຂວງ, ນະຄອນຫຼວງ ເປັນຜູ້ຮັບຮອງ ບຸກຄົນທີ່ຖືກຄັດເລືອກເຂົ້າໃນຄະນະຮັບຜິດຊອບ ການຈັດຕັ້ງສາສະໜາ ທີ່ເຄື່ອນໄຫວ ຢູ່ ພາຍໃນ ແຂວງ, ນະຄອນຫຼວງ.

ກໍລະນີ ບຸກຄົນທີ່ຖືກຄັດເລືອກເຂົ້າເປັນຄະນະຮັບຜິດຊອບການຈັດຕັ້ງສາສະໜາ ຖືກປົດຕຳແໜ່ງ ແລະ ຍົກຍ້າຍ ການຈັດຕັ້ງສາສະໜາ ຕ້ອງແຈ້ງໃຫ້ ຂະແໜງການ ພາຍໃນ ຊາບ.

**2.7. ເອກະສານຢັ້ງຢືນທີ່ໄດ້ກຳນົດໄວ້ໃນ ໝວດທີ 2 ມາດຕາ 9.**

ການຈັດຕັ້ງສາສະໜາ, ນັກບວດ ແລະ ນັກສອນສາສະໜາ ຢູ່ ສປປ ລາວ ໃຫ້ມີເອກະສານຢັ້ງຢືນ ດັ່ງນີ້:

1) ການຈັດຕັ້ງສາສະໜາ ທີ່ເຄື່ອນໄຫວກວມເອົາຫຼາຍແຂວງ ຕ້ອງມີໃບອະນຸຍາດ ຈາກ ກະຊວງພາຍໃນ. ການຈັດຕັ້ງສາສະໜາ ຢູ່ ທ້ອງຖິ່ນ ຕ້ອງມີໃບອະນຸຍາດ ຈາກເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
2) ພະສົງ, ສາມະເນນ, ນັກບວດ, ພໍ່ຂາວ ແລະ ແມ່ຂາວ ໃຫ້ມີປື້ມສຳມະໂນ ແລະ ໜັງສືສຸດທິ;
3) ຄູສອນສາສະໜາ ຂອງແຕ່ລະສາສະໜາ ຕ້ອງມີບັດຢັ້ງຢືນ ຈາກການຈັດຕັ້ງສາສະໜາຕົນ.

ການຈັດຕັ້ງສາສະໜາ ມີຄວາມຮັບຜິດຊອບ ແຈ້ງລາຍຊື່ບຸກຄົນ ທີ່ເປັນຄູສອນສາສະໜາ ແລະ ນັກບວດ, ນັກສອນສາສະໜາ ທີ່ໄດ້ຮັບ ສຳມະນະສັກ ໃຫ້ ຂະແໜງການ ພາຍໃນ ຊາບ.

ກໍລະນີ ຄູສອນສາສະໜາ ຖືກປົດຕຳແໜ່ງ ແລະ ຍົກຍ້າຍ ຕ້ອງແຈ້ງໃຫ້ ຂະແໜງການ ພາຍໃນ ຊາບເຊັ່ນດຽວກັນ.

3. ການເຄື່ອນໄຫວສາສະໜາ (ໝວດທີ 3)

3.1. ການເຄື່ອນໄຫວວຽກງານສາສະໜາ ທີ່ໄດ້ກຳນົດໄວ້ໃນ ມາດຕາ 12 ມີຄຳແນະນຳເພີ່ມຕື່ມ:

ກ. ການຈັດກອງປະຊຸມ ຂອງການຈັດຕັ້ງສາສະໜາ ທີ່ເຄື່ອນໄຫວກວມເອົາຫຼາຍແຂວງ

ການຈັດຕັ້ງສາສະໜາ ທີ່ເຄື່ອນໄຫວກວມເອົາຫຼາຍແຂວງ ທີ່ມີຈຸດປະສົງຈັດກອງປະຊຸມ, ຝຶກອົບຮົມ, ສຳມະນາ ມີຄວາມຮັບຜິດຊອບ ຍື່ນເອກະສານດຳເນີນກອງປະຊຸມ ເຖິງ ກະຊວງພາຍໃນ ແລະ ປະກອບເອກະສານ ດັ່ງນີ້:

1) ໜັງສືສະເໜີ ຂອງການຈັດຕັ້ງສາສະໜາ;
2) ແຜນຈັດກອງປະຊຸມ ໃນນັ້ນ ຕ້ອງລະບຸ ເຫດຜົນ ຄວາມຈຳເປັນ, ຈຸດປະສົງ, ເນື້ອໃນເອກະສານ, ວິທີການ, ເປົ້າໝາຍຜູ້ເຂົ້າຮ່ວມ, ຄະນະຮັບຜິດຊອບ, ສະຖານທີ່ ແລະ ວັນເວລາ, ຄາດຄະເນຜົນໄດ້ຮັບ, ງົບປະມານ, ວິທີຈັດຕັ້ງປະຕິບັດ ແລະ ວາລະດຳເນີນກອງປະຊຸມ.

ພາຍຫຼັງ ໄດ້ຮັບເອກະສານຄົບຖ້ວນແລ້ວ ກະຊວງພາຍໃນ ມີຄວາມຮັບຜິດຊອບ ຄົ້ນຄວ້າ, ພິຈາລະນາ ແລະ ແຈ້ງຕອບ ເປັນລາຍລັກອັກສອນ ພາຍໃນກຳນົດ ຊາວວັນ. ກໍລະນີບໍ່ເຫັນດີ ໃຫ້ຊີ້ແຈງເຫດຜົນຢ່າງຈະແຈ້ງ.

**ຂ. ການຈັດກອງປະຊຸມ ຂອງການຈັດຕັ້ງສາສະໜາ ທີ່ເຄື່ອນໄຫວພາຍໃນແຂວງ, ນະຄອນຫຼວງ.**

ການຈັດຕັ້ງສາສະໜາ ທີ່ເຄື່ອນໄຫວພາຍໃນແຂວງ, ນະຄອນຫຼວງ ທີ່ມີຈຸດປະສົງຈັດກອງປະຊຸມ, ຝຶກອົບຮົມ, ສຳມະນາ ມີຄວາມຮັບຜິດຊອບຍື່ນເອກະສານດຳເນີນກອງປະຊຸມ ເຖິງພະແນກພາຍໃນແຂວງ, ນະຄອນຫຼວງ ແລະ ປະກອບເອກະສານ ດັ່ງນີ້:

1) ໜັງສືສະເໜີ ຂອງການຈັດຕັ້ງສາສະໜາ;
2) ແຜນຈັດກອງປະຊຸມ ໃນນັ້ນຕ້ອງລະບຸ ເຫດຜົນ ຄວາມຈຳເປັນ, ຈຸດປະສົງ, ເນື້ອໃນເອກະສານ, ວິທີການ, ເປົ້າໝາຍຜູ້ເຂົ້າຮ່ວມ, ຄະນະຮັບຜິດຊອບ, ສະຖານທີ່ ແລະ ວັນເວລາ, ຄາດຄະເນຜົນໄດ້ຮັບ, ງົບປະມານ, ວິທີຈັດຕັ້ງປະຕິບັດ ແລະ ວາລະດຳເນີນກອງປະຊຸມ.

ພາຍຫຼັງ ໄດ້ຮັບເອກະສານຄົບຖ້ວນແລ້ວ ພະແນກພາຍໃນແຂວງ, ນະຄອນຫຼວງ ມີຄວາມຮັບຜິດຊອບ ຄົ້ນຄວ້າ, ພິຈາລະນາ ແລະ ແຈ້ງຕອບ ເປັນລາຍລັກອັກສອນ ພາຍໃນກຳນົດ ຊາວວັນ. ກໍລະນີບໍ່ເຫັນດີ ໃຫ້ຊີ້ແຈງເຫດຜົນຢ່າງຈະແຈ້ງ.

**ຄ. ການປະກອບ ພິທີກຳ, ກິດຈະກຳ, ການແຜ່ປັດໄຈ ແລະ ງານບຸນຕ່າງໆ ທາງສາສະໜາ.**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງສາສະໜາ ທີ່ມີຈຸດປະສົງ ປະກອບພິທີກຳ, ກິດຈະກຳ, ແຜ່ປັດໄຈ ແລະ ງານບຸນຕ່າງໆ ທາງສາສະໜາຕ້ອງປະຕິບັດ ດັ່ງນີ້:

- ກໍລະນີ ເຄື່ອນໄຫວຢູ່ ພາຍໃນບ້ານ ຕ້ອງໄດ້ຮັບອະນຸຍາດຈາກ ນາຍບ້ານ;
- ກໍລະນີ ໄປເຄື່ອນໄຫວຢູ່ບ້ານອື່ນ ພາຍໃນເມືອງດຽວກັນ, ເທດສະບານ, ນະຄອນ ຕ້ອງໄດ້ຮັບອະນຸຍາດ ຈາກ ເຈົ້າເມືອງ, ຫົວໜ້າ ເທດສະບານ ແລະ ເຈົ້ານະຄອນ;
- ກໍລະນີ ເຄື່ອນໄຫວ ຢູ່ເມືອງອື່ນ, ເທດສະບານ ແລະ ນະຄອນ ພາຍໃນ ແຂວງດຽວກັນ, ນະຄອນຫຼວງ ຕ້ອງໄດ້ຮັບອະນຸຍາດ ຈາກເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ກໍລະນີ ເຄື່ອນໄຫວ ຢູ່ ແຂວງອື່ນ, ນະຄອນຫຼວງ ຕ້ອງໄດ້ຮັບອະນຸຍາດ ຈາກ ກະຊວງພາຍໃນ.

**3.2. ການຂໍອະນຸຍາດບວດ**

ການຂໍອະນຸຍາດບວດ ທີ່ໄດ້ກຳນົດໄວ້ໃນ ມາດຕາ 13 ໝາຍເຖິງ ບຸກຄົນ ຜູ້ສະໝັກໃຈດຳລົງຊີວິດຕາມຫຼັກສະດີ, ລະບຽບ, ຫຼັກທຳ ຄຳສັ່ງສອນ ຂອງສາສະໜາ ທີ່ຕົນເອງເຊື່ອຖື.

**ກ. ການຂໍອະນຸຍາດບວດ 3 ເດືອນຂຶ້ນໄປ ຕ້ອງປະກອບເອກະສານ ດັ່ງນີ້:**

1) ຄຳຮ້ອງ;
2) ໜັງສືສະເໜີຂອງນາຍບ້ານ;
3) ໜັງສືຢັ້ງຢືນ ຈາກວັດ ທີ່ຕົນຈະໄປອາໄສຢູ່;
4) ໜັງສືຢັ້ງຢືນທີ່ຢູ່;

5) ໜັງສືຮັບປະກັນ;

6) ໜັງສືກວດສຸຂະພາບ;

7) ໜັງສືແຈ້ງໂທດ ສຳລັບຜູ້ທີ່ມີອາຍຸ 18 ປີຂຶ້ນໄປ;

8) ຊີວະປະຫວັດຫຍໍ້;

9) ປຶ້ມສຳມະໂນຄົວ ຫຼື ບັດປະຈຳຕົວ.

ຜູ້ທີ່ມີສັດທາຂໍເຂົ້າບວດ ມີຄວາມຮັບຜິດຊອບ ປະກອບເອກະສານຄົບຖ້ວນຕາມທີ່ໄດ້ກຳນົດໄວ້ຂ້າງເທິງ ແລ້ວ ນຳສະເໜີ ຫ້ອງການພາຍໃນເມືອງ, ເທດສະບານ, ນະຄອນ ຄົ້ນຄວ້າ ແລະ ພິຈາລະນາກ່ອນ ທ່ານເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຈະອະນຸຍາດ.

ຂ. ກໍລະນີ ບວດບໍ່ເກີນ 3 ເດືອນ ຕ້ອງໄດ້ຮັບອະນຸຍາດຈາກນາຍບ້ານ ໂດຍການເຫັນດີ ຈາກຜູ້ປົກຄອງ ຜົວ ຫຼື ເມຍ ແລະ ຕ້ອງປະກອບເອກະສານ ດັ່ງນີ້:

1) ໜັງສືສະເໜີ;

2) ປຶ້ມສຳມະໂນຄົວ ຫຼື ບັດປະຈຳຕົວ;

3) ໜັງສືອະນຸຍາດບວດ.

ຜູ້ທີ່ມີສັດທາຂໍເຂົ້າບວດ ມີຄວາມຮັບຜິດຊອບ ປະກອບເອກະສານຄົບຖ້ວນຕາມທີ່ໄດ້ກຳນົດໄວ້ຂ້າງເທິງ ແລ້ວ ນຳສະເໜີ ນາຍບ້ານ ຄົ້ນຄວ້າ, ພິຈາລະນາ ແລະ ອະນຸຍາດ.

ຄ. ສຳລັບຄົນຕ່າງປະເທດ ທີ່ຈະບວດ ແກ້ບະ ຫຼື ເກີນ 03 ເດືອນ ຕ້ອງປະກອບເອກະສານ ດັ່ງນີ້:

1) ຄຳຮ້ອງ;

2) ໜັງສືຢັ້ງຢືນ ຈາກວັດທີ່ຕົນຈະໄປອາໃສຢູ່;

3) ໜັງສືສະເໜີ ຂອງການຈັດຕັ້ງສາສະໜາ;

4) ໜັງສືຮັບປະກັນ;

5) ໜັງສືຢັ້ງຢືນຈາກສະຖານທູດ;

6) ໜັງສືຢັ້ງຢືນຈາກກະຊວງການຕ່າງປະເທດ;

7) ໜັງສືຜ່ານແດນ;

8) ບັດປະຈຳຕົວ;

9) ໜັງສືພັກເຊົາ;

10) ຊີວະປະຫວັດຫຍໍ້;

11) ໜັງສືກວດສຸຂະພາບ.

ຜູ້ທີ່ມີສັດທາຂໍເຂົ້າບວດ ມີຄວາມຮັບຜິດຊອບ ປະກອບເອກະສານຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນຂ້າງເທິງແລ້ວ ນຳສະເໜີ ກະຊວງພາຍໃນ ພິຈາລະນາ ແລະ ອະນຸຍາດ.

**3.3. ການກໍ່ສ້າງ, ບູລະນະ ແລະ ປະຕິສັງຂອນ ສາສະນະສະຖານ (ມາດຕາ 16)**

ການກໍ່ສ້າງ, ບູລະນະ ແລະ ປະຕິສັງຂອນ ສາສະນະສະຖານ ຕ້ອງໄດ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ວ່າດ້ວຍ ມໍລະດົກແຫ່ງຊາດ, ກົດໝາຍ ວ່າດ້ວຍ ຜັງເມືອງ, ກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ ໂດຍໃຫ້ປະຕິບັດຕາມເງື່ອນໄຂ ແລະ ປະກອບເອກະສານ ດັ່ງນີ້:

**ກ. ເງື່ອນໄຂ ການກໍ່ສ້າງ ສາສະນະສະຖານ**

ການຈັດຕັ້ງສາສະໜາ ທີ່ມີຈຸດປະສົງ ກໍ່ສ້າງສາສະນະສະຖານ ເປັນຕົ້ນ ວັດ, ໂບດ, ທຳມະສະພາ ແລະ ສຸເຫຼົ່າ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

- ມີຜູ້ປະຈຳຢູ່ ສາສະນະສະຖານເປັນຕົ້ນ ເຈົ້າອະທິການວັດ, ຫົວໜ້າໂບດ, ຫົວໜ້າ ທຳມະສະພາ ແລະ ຫົວໜ້າສຸເຫຼົ່າ;
- ມີທີ່ຕັ້ງ ແລະ ສະຖານທີ່ ທີ່ເໝາະສົມ ບໍ່ຫ່າງໄກຈາກບ້ານ;
- ເນື້ອທີ່ດິນ 0,5 ເຮັກຕາ ຂຶ້ນໄປ;
- ມີເອກະສານສິດນຳໃຊ້ທີ່ດິນ ຕາມກົດໝາຍ ວ່າດ້ວຍ ທີ່ດິນ (ສິດນຳໃຊ້ທີ່ດິນ ເປັນຂອງສາສະນະສະຖານ);
- ປະຊາຊົນພາຍໃນບ້ານ ແລະ ອົງການປົກຄອງບ້ານ ມີຄວາມເຫັນດີ ເປັນເອກະພາບກັນ.

**ຂ. ເອກະສານປະກອບ ການກໍ່ສ້າງ ສາສະນະສະຖານ ດັ່ງນີ້:**

- ໜັງສືສະເໜີ ຂອງການຈັດຕັ້ງສາສະໜາ;
- ບົດບັນທຶກກອງປະຊຸມ ຂອງອົງການປົກຄອງບ້ານ;
- ໜັງສືແຕ່ງຕັ້ງ ຄະນະຮັບຜິດຊອບ ການກໍ່ສ້າງ;
- ໜັງສືສະເໜີ ຂໍອະນຸຍາດກໍ່ສ້າງ ຂອງອົງການປົກຄອງບ້ານ;
- ບົດວິພາກການກໍ່ສ້າງ;
- ເອກະສານສິດນຳໃຊ້ທີ່ດິນ ຕາມກົດໝາຍ ວ່າດ້ວຍ ທີ່ດິນ (ສິດນຳໃຊ້ທີ່ດິນ ເປັນຂອງສາສະນະສະຖານ);
- ໜັງສືຢັ້ງຢືນ ຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ;
- ໜັງສືຢັ້ງຢືນ ຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

**ຄ. ຂັ້ນຕອນ ການນຳສະເໜີການກໍ່ສ້າງສາສະນະສະຖານ**

- ການຈັດຕັ້ງສາສະໜາ ທີ່ມີຈຸດປະສົງ ກໍ່ສ້າງສາສະນະສະຖານ ມີຄວາມຮັບຜິດຊອບ ປະກອບເອກະສານໃຫ້ຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນຂໍ້ ຂ ຂອງຄຳແນະນຳສະບັບນີ້ ສະເໜີອົງການປົກຄອງບ້ານ ຄົ້ນຄວ້າ ແລະ ພິຈາລະນາ ແລ້ວ ນຳສະເໜີ ຫ້ອງການ ພາຍໃນເມືອງ, ເທດສະບານ, ນະຄອນ ໂດຍໄດ້ຮັບການເຫັນດີຢັ້ງຢືນຂອງ ຫ້ອງການຖະແຫຼງຂ່າວ, ວັດທະນະ ທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ກ່ອນ ນຳສະເໜີ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ;

- ພາຍຫຼັງ ເຈົ້າເມືອງ, ຫົວໜ້າ ເທດສະບານ, ເຈົ້ານະຄອນ ມີຄຳເຫັນ ແລ້ວ ນຳສະເໜີ ພະແນກພາຍໃນ ແຂວງ, ນະຄອນຫຼວງ ໂດຍໄດ້ຮັບການເຫັນດີຢັ້ງຢືນຂອງ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ກ່ອນ ນຳສະເໜີ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ພາຍຫຼັງ ທີ່ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ມີຄຳເຫັນ ແລ້ວສະເໜີ ລັດຖະມົນຕີ ກະຊວງພາຍໃນ ເພື່ອຄົ້ນຄວ້າ, ພິຈາລະນາ ແລະ ອອກຂໍ້ຕົກລົງອະນຸມັດ ຫຼື ບໍ່ອະນຸມັດ ການກໍ່ສ້າງ ພາຍໃນກຳນົດເວລາ ຊາວວັນ.

**ງ. ການກໍ່ສ້າງພັດທະສີມາ ຕ້ອງປະກອບ ເອກະສານ ດັ່ງນີ້:**

1) ຂໍ້ຕົກລົງ ວ່າດ້ວຍ ການອະນຸມັດການສ້າງຕັ້ງວັດ ( ສຳລັບ ວັດທີ່ສ້າງກ່ອນດຳລັດ ສະບັບນີ້ ຕ້ອງມີໜັງສືຢັ້ງຢືນ ການສ້າງວັດ ຈາກເຈົ້າແຂວງ, ເຈົ້າຄອນນະຄອນຫຼວງ );
2) ບົດບັນທຶກກອງປະຊຸມ;
3) ໜັງສື ແຕ່ງຕັ້ງຄະນະຮັບຜິດຊອບ ການກໍ່ສ້າງ;
4) ໜັງສືສະເໜີຂໍອະນຸຍາດກໍ່ສ້າງ;
5) ບົດວິພາກການກໍ່ສ້າງ;
6) ເອກະສານສິດນຳໃຊ້ທີ່ດິນ ຕາມກົດໝາຍ ວ່າດ້ວຍ ທີ່ດິນ (ສິດນຳໃຊ້ທີ່ດິນ ເປັນຂອງສາສະນະສະຖານ);
7) ໜັງສືຢັ້ງຢືນ ຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ;
8) ໜັງສືຢັ້ງຢືນ ຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

**ຈ. ຂັ້ນຕອນ ການນຳສະເໜີການກໍ່ສ້າງພັດທະສີມາ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:**

- ການຈັດຕັ້ງສາສະໜາ ທີ່ມີຈຸດປະສົງ ກໍ່ສ້າງພັດທະສີມາ ມີຄວາມຮັບຜິດຊອບ ປະກອບເອກະສານໃຫ້ຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນຂໍ້ ງ ຂອງຄຳແນະນຳສະບັບນີ້ ສະເໜີອົງການປົກຄອງບ້ານ ຄົ້ນຄວ້າ ແລະ ພິຈາລະນາ ແລ້ວ ນຳສະເໜີ ຫ້ອງການ ພາຍໃນເມືອງ, ເທດສະບານ, ນະຄອນ ໂດຍໄດ້ຮັບການເຫັນດີຢັ້ງຢືນຂອງ ຫ້ອງການ ຖະແຫຼງຂ່າວ, ວັດທະນະ ທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ກ່ອນ ນຳສະເໜີເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ;
- ພາຍຫຼັງ ເຈົ້າເມືອງ, ຫົວໜ້າ ເທດສະບານ, ເຈົ້ານະຄອນ ມີຄຳເຫັນ ແລ້ວ ນຳສະເໜີ ພະແນກພາຍໃນ ແຂວງ, ນະຄອນຫຼວງ ໂດຍໄດ້ຮັບການເຫັນດີຢັ້ງຢືນຂອງ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ກ່ອນ ນຳສະເໜີ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ພາຍຫຼັງ ທີ່ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ມີຄຳເຫັນ ແລ້ວສະເໜີ ລັດຖະມົນຕີ ກະຊວງພາຍໃນ ເພື່ອຄົ້ນຄວ້າ, ພິຈາລະນາ ກ່ອນ ສະເໜີ ນາຍົກລັດຖະມົນຕີ ອອກຂໍ້ຕົກລົງ ອະນຸມັດ.

ສ. ເອກະສານ ປະກອບ ການບູລະນະ ແລະ ປະຕິສັງຂອນ ສາສະນະສະຖານ

ການຈັດຕັ້ງສາສະໜາ ທີ່ມີຈຸດປະສົງ ບູລະນະ ແລະ ປະຕິສັງຂອນ ສາສະນະສະຖານ ທີ່ບໍ່ໄດ້ເປັນມໍລະດົກ ແຫ່ງຊາດ ມີຄວາມຮັບຜິດຊອບ ປະກອບເອກະສານ ດັ່ງນີ້:

1) ບົດບັນທຶກ ກອງປະຊຸມ;
2) ໜັງສືແຕ່ງຕັ້ງ ຄະນະຮັບຜິດຊອບ ການບູລະນະ ແລະ ປະຕິສັງຂອນ;
3) ຂໍ້ຕົກລົງ ຫຼື ໜັງສືຢັ້ງຢືນ ການກໍ່ສ້າງສາສະນະສະຖານ;
4) ໜັງສືສະເໜີ ຂໍອະນຸຍາດ ການບູລະນະ ແລະ ປະຕິສັງຂອນ;
5) ບົດວິພາກ ການບູລະນະ ແລະ ປະຕິສັງຂອນ;
6) ໜັງສືຢັ້ງຢືນ ຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ;
7) ໜັງສືຢັ້ງຢືນ ຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ຊ. ຂັ້ນຕອນ ການບູລະນະ ແລະ ປະຕິສັງຂອນ ສາສະນະສະຖານ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

- ການຈັດຕັ້ງສາສະໜາ ທີ່ມີຈຸດປະສົງ ບູລະນະ ແລະ ປະຕິສັງຂອນ ສາສະນະສະຖານ ມີຄວາມຮັບຜິດຊອບ ປະກອບເອກະສານໃຫ້ຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນຂໍ້ ສ ຂອງຄຳແນະນຳສະບັບນີ້ ສະເໜີອົງການປົກຄອງບ້ານ ຄົ້ນຄວ້າ ແລະ ພິຈາລະນາ ແລ້ວ ນຳສະເໜີ ຫ້ອງການ ພາຍໃນເມືອງ, ເທດສະບານ, ນະຄອນ ໂດຍໄດ້ຮັບການເຫັນດີຢັ້ງຢືນຂອງ ຫ້ອງການ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ກ່ອນ ນຳສະເໜີເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ;
- ພາຍຫຼັງ ເຈົ້າເມືອງ, ຫົວໜ້າ ເທດສະບານ, ເຈົ້ານະຄອນ ມີຄຳເຫັນ ແລ້ວ ນຳສະເໜີ ພະແນກພາຍໃນແຂວງ, ນະຄອນຫຼວງ ໂດຍໄດ້ຮັບການເຫັນດີຢັ້ງຢືນຂອງ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ກ່ອນ ນຳສະເໜີ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ພາຍຫຼັງ ທີ່ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ມີຄຳເຫັນ ແລ້ວສະເໜີ ລັດຖະມົນຕີ ກະຊວງພາຍໃນ ເພື່ອຄົ້ນຄວ້າ, ພິຈາລະນາ ແລະ ອອກຂໍ້ຕົກລົງ ອະນຸມັດ ພາຍໃນກຳນົດ ຊາວວັນ.

ສຳລັບ ການບູລະນະ ແລະ ປະຕິສັງຂອນ ພັດທະສີມາ ແມ່ນ ນາຍົກລັດຖະມົນຕີ ເປັນຜູ້ອອກຂໍ້ຕົກລົງອະນຸມັດ.

### 3.4. ການໄປເຄື່ອນໄຫວວຽກງານສາສະໜາ ຢູ່ຕ່າງປະເທດ (ມາດຕາ 19)

ການຈັດຕັ້ງສາສະໜາ, ພະສົງ, ສາມະເນນ, ພໍ່ຂາວ, ແມ່ຂາວ, ນັກບວດ ຫຼື ສາສະນິກະຊົນ ຂອງທຸກສາສະໜາ ຢູ່ ສປປ ລາວ ທີ່ມີຈຸດປະສົງ ໄປເຄື່ອນໄຫວເຂົ້າຮ່ວມກອງປະຊຸມ, ສຳມະນາ, ຝຶກອົບຮົມ, ໄປທັດສະນະສຶກສາ, ຢັ້ງມຢາມສັນຖະວະໄມຕີ ຫຼື ງານບຸນສາສະໜາ ຢູ່ ຕ່າງປະເທດດ້ວຍທຶນສ່ວນຕົວ, ທຶນຂອງອົງການຈັດຕັ້ງ ຫຼື ທຶນຂອງຕ່າງປະເທດ ຕ້ອງໄດ້ຮັບການເຫັນດີ ຈາກຂະແໜງການພາຍໃນ ໂດຍການສະເໜີ ຂອງອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ແລະ ມີຄວາມຮັບຜິດຊອບ ປະກອບເອກະສານ ດັ່ງນີ້:

1) ໜັງສືສະເໜີ ໃນນັ້ນ ໃຫ້ບອກແຈ້ງເຖິງຈຸດປະສົງ, ເປົ້າໝາຍ, ເນື້ອໃນ, ລາຍການ, ກຳນົດເວລາ, ສະຖານທີ່ເຄື່ອນໄຫວ ຢູ່ ຕ່າງປະເທດ ແລະ ງົບປະມານຮັບໃຊ້;
2) ໜັງສືເຊີນ ຈາກການຈັດຕັ້ງສາສະໜາ ແລະ ການຈັດຕັ້ງອື່ນ;
3) ໜັງສືອະນຸຍາດ ຈາກ ການຈັດຕັ້ງສາສະໜາຕົນ;
4) ເອກະສານອື່ນ ທີ່ກ່ຽວຂ້ອງ.

ພາຍຫຼັງ ປະກອບເອກະສານຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ຢູ່ຂ້າງເທິງ ແລ້ວ ນຳສະເໜີ ກະຊວງພາຍໃນ ກ່ອນ 15 ວັນ ເພື່ອ ຄົ້ນຄວ້າ, ພິຈາລະນາ ແລະ ອະນຸຍາດ.

### 3.5. ການຮັບ ແລະ ການໃຫ້ ການຊ່ວຍເຫຼືອ (ມາດຕາ 20)

ການຮັບ ແລະ ການໃຫ້ ການຊ່ວຍເຫຼືອ ອະທິບາຍເພີ່ມເຕີມ ດັ່ງນີ້:

ສາສະນິກະຊົນ ຫຼື ການຈັດຕັ້ງສາສະໜາ ທີ່ເຄື່ອນໄຫວກວມເອົາຫຼາຍແຂວງ ທີ່ມີຈຸດປະສົງ ຮັບ ແລະ ໃຫ້ການຊ່ວຍເຫຼືອ ຕ້ອງໄດ້ຮັບການເຫັນດີ ແລະ ເຂົ້າຮ່ວມ ຂອງກະຊວງພາຍໃນ .

ສາສະນິກະຊົນ, ການຈັດຕັ້ງສາສະໜາ ທີ່ເຄື່ອນໄຫວພາຍໃນແຂວງ, ນະຄອນຫຼວງ ທີ່ມີຈຸດປະສົງ ຮັບ ແລະ ໃຫ້ການຊ່ວຍເຫຼືອ ຕ້ອງໄດ້ຮັບການເຫັນດີ ແລະ ເຂົ້າຮ່ວມ ຂອງ ພະແນກພາຍໃນແຂວງ, ນະຄອນຫຼວງ.

ກໍລະນີ ສາສະນິກະຊົນ ຫຼື ການຈັດຕັ້ງສາສະໜາ ມີຈຸດປະສົງ ຮັບ ແລະ ໃຫ້ການຊ່ວຍເຫຼືອ ຢູ່ຂັ້ນເມືອງ ແລະ ຂັ້ນບ້ານ ຕ້ອງມີການເຂົ້າຮ່ວມ ຂອງຫ້ອງການພາຍໃນ ເມືອງ, ເທດສະບານ, ນະຄອນ.

ພາຍຫຼັງ ການ ຮັບ ແລະ ການໃຫ້ ການຊ່ວຍເຫຼືອ ສຳເລັດແລ້ວ ການຈັດຕັ້ງສາສະໜາ ຕ້ອງລາຍງານເປັນລາຍລັກອັກສອນໃຫ້ ຂະແໜງການ ພາຍໃນ ຮັບຊາບ ພາຍໃນກຳນົດ ເຈັດວັນ.

### 3.6. ການເຊື້ອເຊີນການຈັດຕັ້ງສາສະໜາ ຢູ່ ຕ່າງປະເທດ ເຂົ້າມາ ສປປ ລາວ (ມາດຕາ 21)

ການຈັດຕັ້ງ ຫຼື ບຸກຄົນ ຂອງສາສະໜາ ຢູ່ ສປປ ລາວ ມີຈຸດປະສົງ ຢາກເຊື້ອເຊີນການຈັດຕັ້ງ ສາສະໜາ ຕ່າງປະເທດ ເຂົ້າມາ ສປປ ລາວ ເພື່ອຈັດກອງປະຊຸມ, ສຳມະນາ, ຝຶກອົບຮົມ, ທັດສະນະສຶກສາ, ຢ້ຽມຢາມສັນຖະວະໄມຕີ ຫຼື ງານບຸນສາສະໜາ ທີ່ໄດ້ກຳນົດໄວ້ຢູ່ ມາດຕາ 21 ວັກທີ 2 ຕ້ອງໄດ້ປະກອບເອກສານດັ່ງນີ້:

1) ໜັງສືສະເໜີ ໃນນັ້ນ ໃຫ້ບອກແຈ້ງເຖິງຈຸດປະສົງ, ເປົ້າໝາຍ, ເນື້ອໃນ, ລາຍການ, ກຳນົດເວລາ, ສະຖານທີ່ເຄື່ອນໄຫວ ແລະ ງົບປະມານຮັບໃຊ້;
2) ເປົ້າໝາຍຜູ້ເຂົ້າຮ່ວມ ຫຼື ຜູ້ທີ່ຈະເຊີນເຂົ້າມາ ( ປະຫວັດຫຍໍ້ ຂອງການຈັດຕັ້ງ ແລະ ບຸກຄົນ ທີ່ຈະເຊີນ );

ພາຍຫຼັງ ປະກອບເອກະສານຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ຢູ່ຂ້າງເທິງ ແລ້ວ ນຳສະເໜີ ກະຊວງພາຍໃນ ກ່ອນ ຫົກສິບວັນ ເພື່ອພິຈາລະນາ ແລະ ອະນຸຍາດ.

ສຳລັບ ການຈັດກອງປະຊຸມ, ສຳມະນາ ແລະ ຝຶກອົບຮົມ ໃຫ້ມີການເຂົ້າຮ່ວມຂອງ ຂະແໜງການພາຍໃນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

## III. ວິທີການຈັດຕັ້ງປະຕິບັດ.

1. ກົມວຽກງານຊົນເຜົ່າ ແລະ ສາສະໜາ ກະຊວງ ພາຍໃນ, ພະແນກພາຍໃນແຂວງ, ນະຄອນຫຼວງ, ຫ້ອງການພາຍໃນເມືອງ, ເທດສະບານ, ນະຄອນ ເປັນເຈົ້າການ ປະສານ ສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ນຳໄປເຜີຍແຜ່ ຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຄຳແນະນຳ ສະບັບນີ້ ໃຫ້ມີປະສິດທິຜົນ;
2. ການຈັດຕັ້ງສາສະໜາ, ຄູສອນສາສະໜາ, ນັກບວດ ແລະ ສາສະນິກະຊົນ ຈົ່ງພ້ອມກັນຈັດຕັ້ງປະຕິບັດ ຄຳແນະນຳ ສະບັບນີ້ ຢ່າງເຂັ້ມງວດ;
3. ຜ່ານການຈັດຕັ້ງປະຕິບັດຕົວຈິງ ໃນກໍລະນີມີບາງບັນຫາ ທີ່ບໍ່ໄດ້ກຳນົດໄວ້ໃນ ຄຳແນະນຳສະບັບນີ້ ໃຫ້ສະເໜີກະຊວງພາຍໃນ ເພື່ອຄົ້ນຄວ້າ ແລະ ພິຈາລະນາ;
4. ຄຳແນະນຳ ສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ລັດຖະມົນຕີ

ຄຳໝັ້ນ ສູນວິເລີດ